# ບົດຮຽນໂຮງຮຽນວັນອາທິດ

ວັນອາທິດ ທີ 17 ກັນຍາ 2023 (09-17-2023)

## ເວົ້າຄວາມຈິງຢ່າງກ້າຫານ

**ຈຸດສຳຄັນໃນບົດຮຽນ:** ເປັນພະຍານຢ່າງກ້າຫານເພື່ອພຣະເຈົ້າ ບາງຄັ້ງໝາຍເຖິງການເວົ້າຄວາມຈິງທີ່ຍາກ.

**ພຣະຄັມພີຕອບສນອງຕໍ່ຊີວິດ.**

ໃນເດືອນ ມິຖຸນາ 4, 1940, ວິນສຕັນ ເຈີຈຽວ (Winston Churchill) ໄດ້ເປັນນາຍົກຣັຖມົນຕີປະມານນຶ່ງເດືອນແລະໄດ້ລຸກຂຶ້ນຕໍ່ໜ້າສະພາ, ບັລຍາຍສິ່ງທີ່ກາຍເປັນບົດປາຖະກະຖາທີ່ມີຊື່ສຽງທີ່ສຸດໃນຊີວິດຂອງເພິ່ນ. ເພິ່ນໄດ້ປະກາດວ່າ: "ພວກເຮົາຕໍ່ສູ້ເທິງຫາດຊາຍ ພວກເຮົາຈະຕໍ່ສູ້ເທິງພາກພື້ນດິນ, ພວກເຮົາຈະຕໍ່ສູ້ເທິງສນາມຣົບ ແລະໃນຖນົນ, ພວກເຮົາຈະຕໍ່ສູ້ເທິງເນີນພູ; ພວກເຮົາຈະບໍ່ຍອມຈຳນົນຈັກເທື່ອ."

ສິ່ງທີ່ພວກເຮົາມັກຈະລືມແມ່ນ ບົດປາຖະກະຖານີ້ໄດ້ກ່າວພາຍຫຼັງຝຣັ່ງເສດໄດ້ຜ່າຍແພ້ໃຫ້ນາຊີ, ແລະທະຫານພັນທະມິດ ກວ່າ 300,000 ຄົນຖືກສັ່ງຍ້າຍອອກຈາກດັນເຄີດ(Dunkirtk). ເຈີຈຽວຊາບວ່າສິລທັມທີ່ອັງກິດຕົກຕ່ຳສຸດໃນເວລານັ້ນ ແລະເຫດນັ້ນປະຊາຊົນຈຶ່ງໄດ້ສລອງຍ້ອນການລ້າຖອຍ. ເພິ່ນຕ້ອງໄດ້ຊ່ອຍໃຫ້ປະເທດຊາດຈຳໄວ້ວ່າພວກເຂົາບໍ່ໄດ້ພົບໄຊຊນະ, ແລະຍັງມີຄວາມເຈັບປວດ, ຄວາມທຸກທໍຣະມານ ແລະຄວາມທໍ້ແທ້ຫຼວງຫຼາຍຢູ່ສຸດຂອບຟ້າ. ເພິ່ນມີໜ້າທີ່ປະກາດຄວາມຈິງອອກໄປໃນເວລາຄວາມຈິງບໍ່ເປັນສິ່ງຈຳເປັນ ສິ່ງທີ່ປະຊາຊົນບໍ່ຢາກຟັງ. ໃນທຳນອງດຽວກັນ, ຄຣິສຕຽນຖືກເອີ້ນໃຫ້ຢືນຢັດເພື່ອຄວາມຈິງບໍ່ແມ່ນພຽງແຕ່ໃນພາກປະຕິບັດເທົ່ານັ້ນ ແຕ່ດ້ານປາກເວົ້າອີກດ້ວຍ. ພວກເຮົາຖືກເອີ້ນໃຫ້ເວົ້າ, ແລະຫຼາຍໆຄັ້ງສິ່ງທີ່ເຮົາຄວນເວົ້າຈະໄປຕໍ່ຕ້ານຄວາມຄິດນິຍົມໃນນັ້ນ. ເຖິງປານນັ້ນກໍຕາມ, ນີ້ແມ່ນພະຍານຝ່າຍພຣະຄຣິດເຈົ້າ. ພວກເຮົາເປັນພະຍານວ່າພຣະເຈົ້າແມ່ນໃຜ ແລະສິ່ງທີ່ພຣະອົງໄດ້ກ່າວ, ບໍ່ວ່າຄຳພະຍານນັ້ນຈະເປັນທີ່ນິຍົມຫຼືບໍ່ກໍຕາມ.

**ພຣະຄັມພີກ່າວວ່າແນວໃດ:** (ເບິ່ງຕາມຂໍ້ 1, 2, ແລະ 3,)

### ການສຶກສາພຣະຄັມພີ

### 1. <u>ດານີເອນ 5:13-16.</u>

*13ດານີເອນໄດ້ຖືກເອີ້ນຕົວມາເຝົ້າພຣະຣາຊາທັນທີ ພຣະຣາຊາຊຶ່ງກ່າວຕໍ່ເພິ່ນວ່າ,"ທ່ານແມ່ນດານີເອນບໍ່? ແລະ ເປັນຄົນນຶ່ງໃນບັນດາພວກຊະເລີຍທີ່ເປັນຊາວຢູດາ ຊຶ່ງພຣະຣາຊບິດາຂອງເຮົາໄດ້ນຳມາຈາກປະເທດຢູດາແມ່ນບໍ? 14ເຮົາໄດ້ຍິນວ່າພຣະວິນຍານບໍຣິສຸດສະຖິດຢູ່ນຳທ່ານ ແລະທ່ານເປັນຜູ້ຊຳນານ ມີຄວາມຮູ້ ແລະສະຕິປັນຍາຢ່າງແປກປະຫຼາດ.15ພວກທີ່ປຶກສາພວກໝໍມົນໄດ້ເຂົ້າມາອ່ານ ແລະແປຄວາມໝາຍຂໍ້ຂຽນນີ້ໃຫ້ເຮົາຮູ້ ແຕ່ພວກເຂົາກໍບໍ່ສາມາດຄົ້ນຄວ້າຫາຄວາມໝາຍໄດ້. 16ບັດນີ້ ເຮົາໄດ້ຍິນວ່າທ່ານສາມາດຄົ້ນຫາຄວາມໝາຍ ແລະອະທິບາຍຄວາມເລິກລັບໄດ້ ສະນັ້ນ ຖ້າທ່ານສາມາດອ່ານແລະບອກຄວາມໝາຍຂອງຂໍ້ຄວາມນີ້ໃຫ້ເຮົາຮູ້ໄດ້ ທ່ານຈະໄດ້ຫົ່ມເສື້ອສີມ່ວງ ໃສ່ສາຍຄໍຄຳກຽດຕິຍົດ ແລະຈະໄດ້ເປັນອຸປະຣາດໃນຣາຊະອານາຈັກ."*

"ລາວໄດ້ເຫັນລາຍມືຂຽນໄວ້ເທິງຝາ." ປະໂຍກເວົ້າເຖິງຈັ່ງລະວັງວິກິດທີ່ບໍ່ສາມາດຢັບຢັ້ງໄດ້. ຂໍ້ຄວາມອາທິດນີ້ຈະໃຫ້ຄວາມກະຈ່າງແຈ້ງເບື້ອງຫຼັງຂອງຄຳເຕືອນນັ້ນ.

- **ການເມືອງ.** ບົດຮຽນເທື່ອກ່ອນສຸມໃສ່ຄວາມຝັນຂອງເນບູກາເນັດຊາ, ກະສັດຍິ່ງໃຫຍ່ຂອງບາບີໂລນ ຜູ້ທີ່ປົກຄອງເປັນເວລາສີ່ສິບສອງປີ. ຫົກປີຕໍ່ໄປນີ້, ເປັນຂີດໝາຍແຫ່ງການຄາດຕະກັມແລະການກະບົດທາງການເມືອງ, ໄດ້ເຫັນຊາຍສີ່ຄົນຕ່າງກັນຂຶ້ນຄອງບັນລັງບາບີໂລນ. ກະສັດສຸດທ້າຍແມ່ນນາໂບນີດັສ(Nabonidus). ເພິ່ນບໍ່ໄດ້ເປັນຄົນນະມັສການທີ່ຈິງຮັກພັກດີຕໍ່ພະຂອງບາບີໂລນ, ມາດຸກ(Marduk); ເພິ່ນໄດ້ຕິດຕາມດວງຈັນ

ພະຊິນ (Sin), ເທວະດາຕົ້ນຕໍຂອງບັນພະບູຣຸດຂອງເພິ່ນ. ນາໂບນີດັສຍ້າຍໄປອາຣາເບັຽບ່ອນທີ່ພຣະອົງສາມາດນະມັສການພະຊິນໂດຍປາສຈາກການຄັດຄ້ານຂອງຊາວບາບີໂລນ. ລູກຊາຍກົກຂອງເພິ່ນ, ເບນຊັດຊາເຣ(Benshazzar) ຍັງຢູ່ເບື້ອງຫຼັງຮັບໃຊ້ເປັນຜູ້ສຳເຣັດຣາຊການແທນເພິ່ນ, ນຳພາໃນຖານະກະສັດປົກຄອງບາບີໂລນ. ລະຍະຫຼາຍປີນີ້, ກອງທັບແລະອຳນາດທາງການເມືອງຂອງບາບີໂລນອ່ອນແອລົງ. ໃນເວລາດຽວກັນ, ເປີເຊັຽໄດ້ຍຶດເອົາດິນແດນຫຼາຍແຫ່ງ ໄດ້ຮັ່ງມີ, ມີກຳລັງແຂງແກ່ນ, ແລະມີອິດທິພົນ.

- **ພັກ.** ເບນຊັດຊາເຣໄດ້ຈັດງານລ້ຽງຍິ່ງໃຫຍ່ຂະນະທີ່ກອງທັບເປີເຊັຽຕັ້ງຄ້າຍຢູ່ນອກກຳແພງເມືອງ. ເພິ່ນຮູ້ວ່າກຳແພງແຂງແກ່ນເຂົ້າໄດ້ຍາກ; ເພິ່ນມີສະບຽງອາຫານເກັບໄວ້ພຽງພໍສຳລັບລ້ຽງພົລເມືອງກຸ້ມນານກວ່າສິບສອງປີ. ດັ່ງນັ້ນ, ເບນຊັດຊາເຣຮູ້ສຶກວ່າເພິ່ນເກັ່ງກ້າ. ໃນຂະນະການກິນລ້ຽງຢູ່, ເບນຊັດຊາເຣໄດ້ສັ່ງໃຫ້ຄົນຮັບໃຊ້ໄປເອົາຈອກເງິນ ຈອກຄຳ ສັກສິດທີ່ຊາວບາບີໂລນໄດ້ຍຶດເອົາມາຈາກວິຫານກຸງເຢຣູຊາເລັມເມື່ອຫ້າສິບປີກ່ອນ. ການຍຶດເອົາຂອງສັກສິດຈາກວິຫານຂອງສັດຕຣູແລະເອົາມາປະດິດສະຖານໄວ້ໃນວິຫານຂອງຕົນເອງເປັນສັນຍາລັກຂອງຄວາມຍິ່ງໃຫຍ່ຂອງພະຜູ້ຊນະເໜືອຄົນທີ່ຜ່າຍແພ້. ການດື່ມຈາກຈອກຄຳສັກສິດນັ້ນແມ່ນວິທີທີ່ເບນຊັດຊາເຣສັ່ນກຳປັ້ນຕໍ່ໜ້າພຣະເຈົ້າຂອງອິສຣາເອນ. ຄຳກິຣິຍາ "ດື່ມ" ບົ່ງບອກເຖິງພາຣະກິດການຕໍ່ສູ້ຕໍ່ໄປ (ດນອ 5:3-4). ດັ່ງນັ້ນ, ໃນເມື່ອການຂັດຂວາງຫຼຸດລົງ, ງານລ້ຽງອາດຈະຊຶມເຂົ້າສູ່ຄວາມມຶນເມົາຢ່າງບ້າຄັ່ງ. ນັກທໍຣະນີສາດໄດ້ຂຸດຄົ້ນຫ້ອງພຣະຣາຊວັງບ່ອນທີ່ງານລ້ຽງຈັດຂຶ້ນ; ຝາຖືກໂບກດ້ວຍກາວຫີນປູນຂາວ. ຂໍ້ຄວາມທີ່ຂຽນຈຶ່ງເຫັນໄດ້ງ່າຍຈາກມ່ານສີຂາວ, ໂດຍສະເພາະເງົາສະທ້ອນດ້ວຍແສງໂຄມໄຟ. ທຸກຄົນຕົກໃຈກົວຍ້ອນຂໍ້ຄວາມທີ່ຂຽນ, ລວມທັງພຣະຣາຊາ. ເພິ່ນສັນຍາຈະໃຫ້ລາງວັນແກ່ຜູ້ທີ່ສາມາດແປຄວາມເລິກລັບຂອງຂໍ້ຄວາມນີ້. ບໍ່ມີຄົນໃດໃນພວກຊັ້ນສູງ, ໂຫຣາຈານ, ຫຼືໝໍມໍ ຂອງເບນຊັດຊາເຣ ສາມາດແປຂໍ້ຄວາມນີ້ໄດ້. ດານີເອນຈຶ່ງໄດ້ຖືກເອີ້ນເຂົ້າໄປໃນຫ້ອງງານລ້ຽງຂອງພຣະຣາຊາ.
- **ຜູ້ທຳນວາຍ.** ຊື່ສຽງຂອງດານີເອນໄດ້ໄປກ່ອນລາວ. ນານກວ່າຫົກສິບປີທີ່ດານີເອນໄດ້ແປຄວາມຝັນຂອງເນບູກາເນັດຊາ; ໃນຈຸດນີ້, ລາວອາດມີອາຍຸແປດສິບປີແລ້ວ. ເບນຊັດຊາເຣເບິ່ງຄືວ່າບໍ່ຮູ້ຈັກດານີເອນ. ໃນສາຍຕາເພິ່ນ ດານີເອນກໍເປັນພຽງຂ້າທາດຊະເລີຍຄົນນຶ່ງ. ຢ່າງໃດກໍຕາມ, ລາວຍັງຢູ່ໃນໃຈຂອງພຣະຣາຊີນີ, ພະນາງໝັ້ນໃຈວ່າດານີເອນສາມາດແກ້ຂໍ້ເລິກລັບນີ້ໄດ້. ພຣະຣາຊີນີ (ຕຳແໜ່ງນີ້ອາດໝາຍເຖິງພຣະມານດາຂອງພຣະຣາຊີນີ), ມະເຫສີຂອງນາໂບນີດັສ), ຍັງຈຳລັກສນະໂດດເດັ່ນ, ຄວາມສລາດ, ແລະຄວາມສາມາດ. ນາງຮູ້ວ່າດານີເອນເປັນຄົນສັດຊື່.

ເຫັນສັດເຈນແລ້ວວ່າ, ເບນຊັດຊາເຣເຊື່ອທຸກສິ່ງທີ່ພຣະຣາຊີນີກ່າວກ່ຽວກັບດານີເອນ. ເພິ່ນຢ້ຳຄືນເກືອບຄຳຕໍ່ຄຳ ຄຳບັລຍາຍທີ່ພຣະນາງກ່າວ. ຕໍ່ຄວາມສາມາດຂອງລາວ, ສອງສິ່ງທີ່ຢືນຢັນກ່ຽວກັບດານີເອນ. ປະການທີນຶ່ງແມ່ນຄວາມສັດຊື່ຂອງລາວ, ລັກສນະທີ່ໄດ້ຮັບການນັບຖືຈາກພຣະຣາຊີນີ. ປະການທີສອງ, ບາງຢ່າງແຕກຕ່າງກ່ຽວກັບດ້ານວິນຍານຂອງດານີເອນ. ທັງພຣະຣາຊີນີແລະເນບູກາເນັດຊາໄດ້ເວົ້າວ່າ "ວິນຍານຂອງພຣະເຈົ້າບໍຣິສຸດສະຖິດຢູ່ໃນດານີເອນ"(ດນອ 4:8-9,18; 5:11). ເບນຊັດຊາເຣໄດ້ໃຊ້ເກືອບຄຳເວົ້າຄືກັນທັງໝົດ(ດນອ 5:14). ແຕ່ຜູ້ຊົງສະຖິດຢູ່ນຳດານີເອນ, ກໍບໍ່ເໝືອນໂລຫະ, ຫີນ, ຫຼືພະໄມ້ທີ່ຄົນນະມັສການ. ແມ່ນພຣະເຈົ້າທ່ຽງແທ້ແລະຊົງພຣະຊົນຢູ່, ຜູ້ຊົງສ້າງສວັນແລະແຜ່ນດິນໂລກ. ການສະຖິດນຳຂອງພຣະເຈົ້າໃນດານີເອນແມ່ນສິ່ງທີ່ແຍກລາວໄວ້ຕ່າງຫາກ.

*ຄວາມສັດຊື່ຂອງເຮົາເສີມສ້າງການເປັນພະຍານຂອງເຮົາແນວໃດ?*

## 2. ດານີເອນ 5:17, 22-23.

*17ດານີເອນໄດ້ທູນຕອບວ່າ, "ຂ້າແດ່ພຣະຣາຊາ ຂໍພຣະອົງຊົງເກັບຂອງພຣະຣາຊານັ້ນໄວ້ ຈົ່ງພຣະຣາຊທານໃຫ້ຜູ້ອື່ນເສັຽ ສ່ວນຂ້າ-*
*ນ້ອຍຈະຂໍອ່ານ ແລະ ທູນຖວາຍຄວາມໝາຍຂໍ້ຄວາມນີ້ໃຫ້ພຣະອົງລ້າໆ. 22ຂ້າແດ່ເບນຊັດຊາເຣ ພຣະລາຊະໂອລົດຂອງກະສັດ ເນບູ*
*ກາດເນັດຊາ ແຕ່ພຣະອົງ ນັ້ນ ເຖິງແມ່ນວ່າຊົງຊາບເຣື່ອງນີ້ແລ້ວກໍຕາມ ກໍບໍ່ໄດ້ຖ່ອມພຣະທັຍເລີຍ. 23ຄືພຣະອົງຊົງຖືຕົນວ່າຍິ່ງໃຫຍ່-*
*ເທົ່າກັບພຣະຜູ້ເປັນເຈົ້າເທິງສວັນຊັ້ນຟ້າ ຊົງນຳເອົາຈອກ ແລະຖ້ວຍມາຈາກວິຫານຂອງພຣະຜູ້ເປັນເຈົ້າ ພຣະອົງພ້ອມດ້ວຍພວກເຈົ້າ*
*ນາຍຊັ້ນສູງ ມະເຫສີແລະນາງສນົມທັງຫຼາຍຂອງພຣະອົງໄດ້ດື່ມເຫຼົ້າອະງຸ່ນຈາກຈອກເຫຼົ່ານັ້ນແລ້ວ ກ່າວສັຣເສີນ ຮູບພະທີ່ເຮັດດ້ວຍຄຳ*
*ດ້ວຍເງິນ ດ້ວຍທອງສຳລິດ ດ້ວຍເຫຼັກ ດ້ວຍໄມ້ ແລະຫີນ ພະເຫຼົ່ານີ້ບໍ່ສາມາດຮູ້ເຫັນ ແລະໄດ້ຍິນອັນໃດໄດ້ ແຕ່ພຣະອົງບໍ່ໄດ້ຖວາຍ*
*ພຣະກຽດແດ່ພຣະເຈົ້າອົງປົກຄອງຊີວິດຂອງພຣະອົງ ແລະ ປົກຄອງ ທຸກໆສິ່ງທີ່ພຣະອົງ ຊົງກະທຳ.*

ຊະເລີຍໄດ້ຢືນຢູ່ຕໍ່ໜ້າພຣະຣາຊາ. ຖ້າຊະເລີຍສາມາດຊ່ອຍໄດ້, ເຖິງຢ່າງໃດກໍຕາມ, ພຣະຣາຊາສັນຍາຈະຍົກລາວຂຶ້ນສູ່ໜ້າທີ່ຊັ້ນທີສາມສູງສຸດຂອງຣາຊອານາຈັກ, ຊັ້ນຜູ້ລອງຂອງເບນຊັດຊາເຣແລະພຣະບິດາຂອງພຣະອົງ ນາໂບນີດັສ. ລາວອາດຈະໄດ້ປຸ່ງນເຄື່ອງນຸ່ງທາດ ແລະສວມເສື້ອຄຸມຂອງພຣະຣາຊາແທນ ແລະເຄື່ອງເອ້, ເປັນສັນຍາລັກຕຳແໜ່ງກະສັດ ແລະຄວາມໂປດປານ.

ເຖິງຢ່າງໃດກໍຕາມ, ດານີເອນໄດ້ປະຕິເສດບຳເໜັດຈາກພຣະຣາຊາໃນຈຸດນີ້. ລາວບໍ່ຢາກສະແດງໃຫ້ຮູ້ສຶກວ່າພຣະຣາຊາໄດ້ຊື້ການຊ່ວຍເຫຼືອຈາກພຣະເຈົ້າຫຼືໃຫ້ສິນບົນພຣະເຈົ້າໃນທາງໃດທາງນຶ່ງ. ຄວາມໂປດປານຂອງພຣະເຈົ້າບໍ່ສາມາດໄດ້ຮັບຫຼືຊື້ເອົາ-ຫຼັກຄຳສອນນີ້ຍັງນຳໃຊ້ກັບພວກເຮົາໃນທຸກວັນນີ້. ກ່ອນຈະອ່ານຂໍ້ຄວາມ, ດານີເອນໄດ້ໃຫ້ຖ້ອຍຄຳ; ລາວໄດ້ເຕືອນເບນຊັດຊາເຣວ່າພຣະເຈົ້າອວຍພອນເນບູກາດເນັດຊາທຸກສິ່ງທີ່ພຣະຣາຊາຢາກໄດ້-ອະທິປະໄຕ, ຄວາມຍິ່ງໃຫຍ່, ພຣະກຽດແລະສງ່າຣາສີ. ແມ້ກະທັ້ງຄົນຕ່າງຊາດກໍຈະຖວາຍກຽດເພິ່ນ. ເຂົາໄດ້ເກງຂາມແລະຢ້ານກົວເພິ່ນ. ສອງຄຳນີ້ໝາຍເຖິງການຕອບສນອງທັງພາຍນອກແລະພາຍໃນ; ຄຳນີ້ແປວ່າ "ເກງຂາມ" ໃຫ້ແນວຄິດຕົວສັ່ນ, ແລະປະຕິກິຣິຍາທາງດ້ານຮ່າງກາຍໂດຍບໍ່ໄດ້ສມັກໃຈ. ເນບູກາເນັດຊາມີສິດຍົກຊູຫຼືທຳລາຍກໍໄດ້ (ດນອ 5:18-19).

ເຖິງຢ່າງໃດກໍຕາມ, ການອວດອົ່ງເປັນການຕົກຕໍ່າຂອງເນບູກາເນັດຊາ (ດນອ 4:28-30). ພຣະເຈົ້າຕີພຣະອົງດ້ວຍສະພາບຮ່າງກາຍຂອງພຣະອົງປົກຄຸມດ້ວຍຂົນເຕັມຕົວ., ແລະພຣະອົງເລີ່ມຄິດເໝືອນ, ປະພຶດເໝືອນ, ແລະໃຊ້ຊີວິດເໝືອນສັດປ່າ. ສະພາບນີ້ແກ່ຍາວເຖິງເຈັດປີ. ຫຼັງຈາກນັ້ນ, ເພິ່ນໄດ້ຍອມມອບຄວາມອວດຕົວຂອງເພິ່ນ. ຜົນຕາມມາຄື ພຣະເຈົ້າໄດ້ຟື້ນຟູສຸຂພາບ ແລະຄວາມຄິດຂອງເພິ່ນ. ເນບູກາເນັດຊາກັບກາຍເປັນຜູ້ຍິ່ງໃຫຍ່ກວ່າທີ່ພຣະອົງເຄີຍເປັນມາແຕ່ກ່ອນ (ດນອ 4:36).

ອາຍຸຂອງເບນຊັດຊາເຣໝາຍເຖິງພຣະອົງສາມາດເຫັນບັນດາປີສຸດທ້າຍຂອງການຄອງຣາດຂອງກະສັດເນບູກາເນັດຊາ. ເພິ່ນຈະຄຸ້ນເຄີຍກັບຄວາມລະອາຍແລະການຟື້ນຟູໃນພາຍໜ້າ ທີ່ເນບູກາເນັດຊາຈະໄດ້ພົບ. ດານີເອນໄດ້ຕຳນິເບນຊັດຊາເຣທີ່ບໍ່ຮຽນເອົາບົດຮຽນສຳຄັນຈາກປະສົບການຂອງເນບູກາເນັດຊາ. ສາມຢ່າງຊີ້ໃຫ້ເຫັນຄວາມແຂງກະດ້າງແລະການອວດຕົວຂອງເບນຊັດຊາເຣ.

1. **ກະສັດບໍ່ຫົວຊານຳການຂົ່ມຂູ່ຂອງກອງທັບເປີເຊັຽທີ່ຫຍັບໃກ້ເຂົ້າມາ.** ທະຫານຍາມທີ່ຢືນເທິງກຳແພງໄດ້ເຝົ້າແນມກອງທັບອັນໃຫຍ່ຫຼວງຂອງເປີເຊັຽທີ່ຫຍັບເຂົ້າໃກ້ບາບີໂລນ. ແນ່ນອນ, ເຂົາໄດ້ສົ່ງສັນຍານ. ເບນຊັດຊາເຣບໍ່ຫົວຊານຳຄຳເຕືອນ; ເພິ່ນໄດ້ວາງຄວາມເຊື່ອໝັ້ນທັງໝົດຂອງເພິ່ນໄວ້ໃນກຳລັງທະຫານແລະໂຄງສ້າງອັນແໜ້ນໜາຂອງເມືອງຂອງເພິ່ນ.
2. **ດານີເອນໄດ້ເຫັນສິ່ງສັກສິດຈາກພຣະວິຫານເຢຣູຊາເລັມຊະເຕັມຫ້ອງ.** ລາວຊາບວ່າສິ່ງເຫຼົ່ານີ້ໄດ້ຖວາຍແດ່ພຣະເຈົ້າແລ້ວ, ແຕ່ດຽວນີ້ເຂົາໄດ້ຢຽບຍ່ຳ, ໃຊ້ເປັນພາຊນະຖວາຍເຫຼົ້າແກ່ເທພເຈົ້າແຫ່ງສຸຣາຂອງບາບີໂລນ. ການເຂົ້າຮ່ວມເປັນການສະແດງອອກເຖິງການຕໍ່ຕ້ານຂອງເບນຊັດຊາເຣ ແລະການບໍ່ສົນໃຈນຳພຣະເຈົ້າອົງບໍຣິສຸດຂອງອິສຣາເອນ.
3. **ເບນຊັດຊາເຣແລະພົລເມືອງຂອງບາບີໂລນຊຸກຍູ້ໃຫ້ມີການນະມັສການພະຫຼຽມເຮັດດ້ວຍໂລຫະ, ໄມ້, ແລະຫີນ.** ເຖິງແມ່ນວ່າກະສັດໄດ້ເຫັນວ່າເນບູກາເນັດຊາຖ່ອມຕົວ ແລະຫຼັງຈາກນັ້ນໄດ້ເລີ່ມ "ສັຣເສີນ, ຍົກຍໍ, ແລະຖວາຍກຽດພຣະເຈົ້າເທິງສວັນຊັ້ນຟ້າ (ດນອ 4:37). ເບັນຊັດຊາເຣປະຕິເສດຕິດຕາມຮ່ອງຮອຍດຽວຢ່າງແຂງແຮງ ແລະປະຕິເສດຖວາຍກຽດພຣະເຈົ້າ ຜູ້ທີ່ເປັນພຣະຜູ້ສ້າງແລະຄວບຄຸມອານາຈັກແລະຊີວິດຂອງມະນຸດ.

*ພວກເຮົາສ່ຽງຕໍ່ຫຍັງເວລາເຮົາເວົ້າຕໍ່ຕ້ານຄວາມບາບ?*

## 3. <u>ດານີເອນ 5:24-28.</u>

*24ດ້ວຍເຫດນີ້ແຫລະ ພຣະເຈົ້າຈຶ່ງສົ່ງມືມາຂຽນຂໍ້ຄວາມເຫຼົ່ານີ້. 25ຕໍ່ໄປນີ້ແມ່ນຂໍ້ຄວາມທີ່ຂຽນຄື: ເມເນ ເມເນ ເທເຄລ ແລະຟາສິນ.*
*26ແປຄວາມໝາຍຂອງມັນມີດັ່ງນີ້ ຄຳ ວ່າ ເມເນ ແມ່ນ ພຣະເຈົ້າ ຊົງ ນັບ ຄຳນວນນີ້ແຫ່ງຣາຊອານາຈັກ ຂອງ ພຣະອົງໄວ້ແລ້ວ ແລະຊົງເຮັດໃຫ້ ຣາຊອານາຈັກນັ້ນສິ້ນສຸດ ລົງ. 27ຄຳວ່າເທເຄລ ແມ່ນພຣະອົງຊົງຖືກຊັ່ງນ້ຳໜັກໃນເຄື່ອງຊັ່ງ ແລະ ຊົງເຫັນວ່າຍັງເບົາຢູ່ຫຼາຍ.*
*28ຄຳວ່າ ຟາສິນ(ເປເຣັດ) ແມ່ນຣາຊອານາຈັກຂອງພຣະອົງຈະຖືກແບ່ງອອກໃຫ້ ຄົນເມເດັຽ ແລະຄົນ ເປີເຊັຽ."*

ດານີເອນກ່າວວ່າ "ພຣະເຈົ້າສູງສຸດ...ພຣະຜູ້ເປັນເຈົ້າຂອງສວັນຊັ້ນຟ້າ...ພຣະເຈົ້າຜູ້ຊົງຖືລົມຫາຍໃຈຊີວິດຂອງທ່ານໃນມືຂອງພຣະອົງຄວບຄຸມຊີວິດຂອງທ່ານ (ດນອ 5:18,23). ຕຳແໜ່ງນີ້ບໍ່ອາດໝາຍເຖິງພະທີ່ສ້າງດ້ວຍມືມະນຸດຫຼືພະຫຼຽມທີ່ບໍ່ມີຊີວິດ. ດານີເອນປະກາດວ່າພຣະເຈົ້າໄດ້ສົ່ງມື ແລະຂໍ້ຄວາມແກ່ເບນຊັດຊາເຣໂດຍຕົງ. ຂໍ້ຄວາມປະກອບດ້ວຍສາມຄຳ; ຄຳທີນຶ່ງແມ່ນເວົ້າລື້ມຄືນ. ຄຳຄຸ້ນເຄີຍທີ່ຖືກໃຊ້ພົວພັນກັບເມໂຊໂປຕາເມັຽໃນການຊັ່ງນ້ຳໜັກ ແລະການວັດແທກ. ການຂຽນສລັກວ່າຢ່າງໃດ?

- **ເມເນ ເມເນ.** ຄຳກິຣິຍານີ້ໝາຍຄວາມວ່າ "ນັບ" ຫຼື "ແຕ່ງຕັ້ງ" ແລະເນັ້ນການນັບສຸດທ້າຍແລະເຕັມ. ການຊ້ຳ, ໂດຍທົ່ວໄປໃນການຂຽນເກົ່າແກ່, ແມ່ນເພື່ອເນັ້ນ. ເມເນ ເມເນ ໝາຍຄວາມວ່າພຣະເຈົ້າໄດ້ກະທຳການຕັດສິນໃຈຂັ້ນສຸດທ້າຍຂອງພຣະອົງ; ໂດຍບໍ່ມີການຕໍ່ວ່າໃດໆ.
- **ເທເຄລ.** ຄຳກິຣິຍານີ້ໝາຍເຖິງການຊັ່ງນ້ຳໜັກຂອງໄລຍະເທິງຊີງ. ພຣະຄັມພີເດີມກ່າວວ່າພຣະເຈົ້າຊັ່ງນ້ຳໜັກການກະທຳຂອງເຮົາທຸກຄົນ (1 ຊມອ 2:3). ພຣະເຈົ້າຊັ່ງການກະທຳຂອງເບນຊັດຊາເຣ; ແທນທີ່ຈະມີມູນຄ່າທີ່ຕ້ອງການ, ມັນກັບໄຮ້ຄ່າ. ກະສັດກັບຂາດຄຸນຄ່າ.
- **ຟາສິນ.** ອັນນີ້ແມ່ນພະຫູພົດຂອງຄຳວ່າເປເຣັດ, ເລັງເຖິງສິ່ງໃດສິ່ງນຶ່ງແຕກເປັນສ່ຽງແລະຖືກແບ່ງ. ຢ່າງໜ້າສົນໃຈ, ນີ້ແມ່ນຄຳເວົ້າທີ່ໃຊ້; ພະຍັນຊະນະດຽວກັນໃນຄຳນີ້ ແລະຄົນເປີເຊັຽ, ຊຶ່ງເລັງເຖິງກອງທັບເປີເຊັຽທີ່ລອມກຳລັງຢູ່ອ້ອມກຳແພງເມືອງ.

*ທ່ານຈະອະທິບາຍວັທນະທັມຂອງພວກເຮົາຢ່າງໃດໃນມຸມມອງການພິພາກສາ?*

ປວັດສາດສອນວ່າຄືນນີ້, ຕຸລາ 16, 539 ກ່ອນ ຄສ(BC), ທະຫານເລີ້ມການແຊກແຊງໄດ້ຂຸດຂຸມແລະປ່ຽນທາງແມ່ນ້ຳເອຟຣາດຊຶ່ງທຳມະດາຈະໄຫຼລອດກຳແພງເມືອງທີ່ແໜ້ນໜາ. ເມື່ອເວລາລະດັບນ້ຳຕ່ຳລົງພໍ, ກອງທັບຝຸງໃຫຍ່ກໍເຄື່ອນພົນລອດກ້ອງກຳແພງ; ເຂົາໄດ້ຂ້າເບນຊັດຊາເຣ, ທະຫານຄຸ້ມກັນແລະພວກຂຸນນາງແລະຍຶດເມືອງ. ເປັນຈຸດຈົບຂອງອານາຈັກບາບີໂລນ. ພວກເຮົາໄດ້ເຫັນບົດຮຽນສຳຄັນບາງບົດຈາກປວັດສາດນີ້. ປະການທີນຶ່ງ, ເຫດການນີ້ເຕືອນເຮົາວ່າພຣະເຈົ້າລົງໂທດຄວາມບາບ, ແມ້ກະທັ້ງທຸກວັນນີ້. ປະການທີສອງ, ການປະເຊີນກັບຄວາມບາບຄວນນຳສູ່ການກັບໃຈແລະຊີວິດໃໝ່.

*ພວກເຮົາຈະຊັ່ງຊາການເວົ້າກ່ຽວກັບການຕັດສິນບາບກັບການອະພັຍບາບທີ່ພຣະເຈົ້າປະທານໃຫ້ຢ່າງໃດ?*

## ນຳໃຊ້ໃນຊີວິດ

ເປັນພະຍານຢ່າງກ້າຫານເພື່ອພຣະເຈົ້າ ບາງຄັ້ງໝາຍເຖິງການເວົ້າຄວາມຈິງທີ່ຍາກ. ຈົ່ງເລືອກການນຳໃຊ້ໃນຊີວິດນຶ່ງຂໍ້ຕໍ່ລົງໄປນີ້:

- **ຈົ່ງກວດເບິ່ງຄວາມທະນົງຕົວຂອງທ່ານ.** ຈົ່ງກວດກາໃຫ້ເຫັນວ່າມີບ່ອນໃດທີ່ທ່ານມີຄວາມໝັ້ນໃຈເກີນສ່ວນໃນຄວາມສາມາດແລະຊັພຍາກອນຂອງທ່ານ. ປະເມີນວ່າແມ່ນຫັຽງພາໃຫ້ຍົກລະດັບຄວາມປອດພັຍນີ້ສູງຂຶ້ນ. ຈົ່ງອະທິຖານໃຫ້ພຣະເຈົ້າຈະຊ່ວຍທ່ານມີທັສນະຄະຕິທີ່ຖືກຕ້ອງກ່ຽວກັບການເພິ່ງພາພຣະອົງ.
- **ຈົ່ງໃຊ້ເວລາສ່ວນຕົວກັບພຣະເຈົ້າ.** ຈົ່ງຕັ້ງເວລາສອງສາມຊົ່ວໂມງທີ່ງຽບສງົບ, ເອົາແຕ່ພຣະຄັມພີ, ປາກກາ, ແລະເຈັ້ຍ. ຈົ່ງໃຊ້ເວລາໃນພຣະຄັມພີແລະອະທິຖານ. ທູນຂໍພຣະເຈົ້າເວົ້າຂໍ້ມູນບາງຢ່າງທີ່ພຣະອົງອາດມີໃຫ້ທ່ານ. ໃຊ້ເວລາສະດັບຟັງຢ່າງງຽບໆ: ບັນທຶກຄວາມປະທັບໃຈທີ່ພຣະອົງປະທານໃຫ້.
- **ຈົ່ງສຸມໃສ່ສິ່ງທີ່ສັກສິດ.** ຈົ່ງເຮັດບັນຊີສອງຄໍລັມ. ຂຽນ "ສັກສິດ" ເປັນຫົວຂໍ້ຄໍລັມຂ້າງຊ້າຍ; ຂຽນ "ທັມນຽມ" ເປັນຫົວຂໍ້ຄໍລັມດ້ານຂວາມື. ໃຕ້ສັກສິດ, ຈົດບັນຊີການກະທຳທີ່ກ່ຽວພັນກັບການນະມັສການທີ່ພຣະຄັມພີບົ່ງບອກ. ໃຕ້ທັມນຽມ, ຈົດບັນຊີການກະທຳທີ່ຄືສາສນາແຕ່ຖືກບັງຄັບໂດຍຄວາມຄາດຫວັງທາງວັທນະທັມແລະປະເພນີ. ອາທິດນີ້ຈົ່ງສຸມໃຈໃສ່ສິ່ງທີ່ພຣະເຈົ້າເອີ້ນວ່າສັກສິດ.

**ອຸປຖັມໂດຍ ລາວຊາວເທີນບັບຕິສສັມພັນ** https://ulsb.org/sunday-school-2/ **ແປໂດຍ PSI**